# ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ

# Law advertising skills in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 15

## ທວນບົດຮຽນ

## Review lesson

ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ ໄດ້ດຳເນີນດ້ວຍຫຼາຍຮູບການ ທີ່ແຕກຕ່າງກັນ, ໃນເວລາເຄື່ອນໄຫວໂຄສະນາແມ່ນຈະໄດ້ນຳໃຊ້ຮູບການທີ່ເໝາະສົມ, ສອດຄ່ອງກັບເງື່ອນໄຂ, ສະພາບການຕົວ ຈິງຂອງສັງຄົມ ແລະ ຄວາມຕ້ອງການທີ່ເກີດຂຶ້ນໃນແຕ່ລະໄລຍະ.

ຈຸດປະສົງຂອງວິຊາທັກສະການໂຄສະນາເຜີຍແຜ່ກົດໝາຍ ເປັນເຄື່ອງມືຮັບໃຊ້ໃຫ້ແກ່ການຝຶກອົບຮົມ ຂອງສະຖາບັນຍຸຕິທຳແຫ່ງຊາດ ກໍຄືສະຖານການສຶກສາອື່ນໆ, ເພື່ອໃຫ້ນັກຝຶກອົບຮົມມີຄວາມເຂົ້າໃຈເປັນເອກະພາບ, ເພີ່ມທັກສະໃນການໂຄສະນາເຜີຍແຜ່ກົດໝາຍ, ປະກອບສ່ວນອັນສຳຄັນໃຫ້ແກ່ການໂຄສະນາເຜີຍແຜ່ກົດໝາຍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ. ນອກຈາກນີ້, ຍັງໄດ້ກຳນົດບັນດາຫຼັກການ ແລະ ຮູບການຕ່າງໆ ໃນການໂຄສະນາເຜີຍແຜ່ກົດໝາຍ ແນໃສ່ເຮັດ ໃຫ້ປະຊາຊົນລາວບັນດາເຜົ່າ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ໄດ້ຮັບຂໍ້ມູນ ຂ່າວສານ ແລະ ເຂົ້າເຖິງການບໍລິການດ້ານກົດໝາຍ ຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເລິກເຊິ່ງ ໃນຂອບເຂດທົ່ວປະເທດ ຂອງ ສປປ ລາວ.

ໃນບົດຮຽນທີ 15 ນີ້ ຈະໄດ້ທວນຄືນບາງຮູບການໃນການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ.

### 1. ຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ

ຈຸດປະສົງທາງສັງຄົມຂອງການໂຄສະນາເຜີຍແຜ່ກົດໝາຍ ແມ່ນໜຶ່ງໃນບັນດາປັດໄຈປະກອບສ້າງ ເປັນໂຄງຮ່າງຂອງການໂຄສະນາເຜີຍແຜ່ກົດໝາຍ. ການກຳນົດຈຸດປະສົງທາງສັງຄົມຢ່າງຖືກຕ້ອງ ຈະຕ້ອງໃຫ້ບັນລຸຜົນໄດ້ ໃນຂະບວນວິວັດແຫ່ງການໂຄສະນາເຜີຍແຜ່ກົດໝາຍ ຊຶ່ງມີບົດບາດສຳຄັນທາງດ້ານທັດສະດີ ແລະ ພຶດຕິກຳ ເພາະວ່າບັນດາມາດຕະການ, ເນື້ອໃນ, ຮູບການ, ວິທີການຂອງການໂຄະສະນາເຜີຍແຜ່ກົດໝາຍ ສ່ວນໃຫຍ່ຈະຂຶ້ນກັບການກຳນົດ ບັນດາຈຸດປະສົງ ທາງສັງຄົມວ່າ ແມ່ນຢາກໃຫ້ໄດ້ອັນໃດ? ຊຶ່ງຈະຕ້ອງໄດ້ຕັ້ງຂຶ້ນກ່ອນ ໃນຂະບວນຂອງການໂຄສະນາເຜີຍແຜ່ກົດໝາຍ, **ຕົວຢ່າງ** ການໂຄສະນາເຜີຍແຜ່ຄວາມຮູ້ດ້ານກົດໝາຍ ແມ່ນຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ, ຖ້າຫາກຖືຄືແນວນັ້ນ ການໂຄສະນາເຜີຍແຜ່ກົດໝາຍ ຈະມີຄວາມເປັນເອກະພາບກັນກັບການສຶກສາອົບຮົມກົດໝາຍ ໂດຍສະເພາະ ແມ່ນຕໍ່ຮູບການສິດສອນ ແລະ ການຮໍ່າຮຽນກົດໝາຍ, ຖ້າຈຸດປະສົງ

ຂອງການໂຄສະນາເຜີຍແຜ່ກົດໝາຍ ຫາກເຮົາຕ້ອງການພຽງແຕ່ຢາກສ້າງຄວາມເຊື່ອໝັ້ນຕໍ່ກົດໝາຍເທົ່ານັ້ນ ກໍຈະມີການຈຳກັດການເລືອກເຟັ້ນເອົາວິທີການ, ພາຫະນະກະທົບໃສ່ປັດໄຈຮູບການ ແລະ ແນວຄິດຂອງບຸກຄົນເທົ່ານັ້ນ, ຈະບໍ່ຕ້ອງການເຖິງພາຫະນະ ແລະ ວິທີການກະທົບອື່ນອີກ. ຖ້າຖືເອົາການສະກັດກັ້ນ ການລ່ວງລະເມີດກົດໝາຍແມ່ນຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ ແນ່ນອນວ່າ ຜູ້ເຮັດການໂຄສະນາເຜີຍແຜ່ກົດໝາຍ ແລະ ເປົ້າໝາຍຂອງໂຄສະນາເຜີຍແຜ່ກົດໝາຍ ຈະຖືກຈຳກັດດ້ານຂອບເຂດ ແລະ ປະລິມານ, ບັນດາພາຫະນະ ແລະ ວິທີການໂຄສະນາເຜີຍແຜ່ກົດໝາຍ ກໍບໍ່ຕ້ອງການນຳໃຊ້ຫຼາຍ. ເປັນອັນແນ່ນອນວ່າ ການກຳນົດຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍທີ່ຖືກຕ້ອງ, ຊັດເຈນ ຫຼື ດ້ານດຽວ, ຜິດພາດ ກໍຈະມີຜົນສະທ້ອນເຖິງຄຸນນະພາບດີ ຫຼື ບໍ່ດີຂອງການໂຄສະນາເຜີຍແຜ່, ການກຳນົດຮູບການ, ພາຫະນະ, ວິທີການ ແລະ ເນື້ອໃນຂອງການໂຄສະນາເຜີຍແຜ່ກົດໝາຍ.

**2. ຂັ້ນຕອນທີ່ຈຳເປັນໃນການຂຽນໂຄງຮ່າງໂຄສະນາເຜີຍແຜ່ກົດໝາຍ**

**ຂັ້ນຕອນທີ 1**: ເພື່ອຂຽນໂຄງຮ່າງບົດໂຄສະນາກົດໝາຍບົດໜຶ່ງໆ ກ່ອນອື່ນໝົດຜູ້ຂຽນຕ້ອງຄົ້ນຄວ້າກົດໝາຍ ທີ່ຕ້ອງເຜີຍແຜ່ນັ້ນຢ່າງລະອຽດເພື່ອກຳໃຫ້ໄດ້ຈິດໃຈ, ເນື້ອໃນຕົ້ນຕໍແລະ ຄວາມໝາຍສຳຄັນຂອງມັນ, ກຳໄດ້ແນວຄິດຊີ້ນຳ ແລະບັນດາຫຼັກການຄອບງຳຕະຫຼອດໄລຍະເວລາການກະກຽມຮ່າງນິຕິກຳນັ້ນ; ກຳແໜ້ນເປົ້າໝາຍດັດປັບ, ຂອບເຂດການດັດປັບຂອງນິຕິກຳ ເປັນຕົ້ນແມ່ນເປົ້າໝາຍພິເສດທີ່ມີຂໍ້ກຳນົດດັດປັບສະເພາະເຊັ່ນ ເດັກນ້ອຍ, ແມ່ຍິງ ແລະ ອື່ນໆ ເພື່ອກຳນົດບັນດາບັນຫາຈຸດສຸມທີ່ຈະຕ້ອງໄດ້ເອົາໃຈໃສ່ໂຄສະນາຊ່ວຍໃຫ້ເປົ້າໝາຍສາມາດຊຸດຄົ້ນ, ນຳໃຊ້ໄດ້ຢ່າງງ່າຍດາຍ;

**ຂັ້ນຕອນທີ 2**: ເກັບກຳ ແລະຄົ້ນຄວ້າຢ່າງລະອຽດເອກະສານຕ່າງໆທີ່ພົວພັນໃນເວລາກະກຽມຮ່າງນິຕິກຳນັ້ນເຊັ່ນ ບົດສະເໜີກ່ຽວກັບການສ້າງຮ່າງນິຕິກຳ, ເອກະສານ (ມະຕິ) ຕ່າງໆຂອງພັກ, ບັນດານະໂຍບາຍຂອງລັດ, ເອກະສານຂອງພາຍໃນແລະຕ່າງປະເທດທີ່ພົວພັນເຖິງເນື້ອໃນຂອງນິຕິກຳ ເພື່ອໃຫ້ກຳໄດ້ທີ່ມາຂອງນິຕິກຳ (ຖ້າວ່າແມ່ນນິຕິກຳ ທີ່ວາງອອກເປັນເທື່ອທຳອິດ) ແລະຄວາມຮຽກຮ້ອງຕ້ອງການຕົວຈິງ, ພາວະວິໄສຊຶ່ງພົວພັນເຖິງເນື້ອໃນຕ່າງໆ ທີ່ຕ້ອງປັບປຸງ, ເພີ່ມເຕີມ (ສຳລັບນິຕິກຳທີ່ປັບປຸງ, ເພີ່ມເຕີມ);

**ຂັ້ນຕອນທີ 3**: ຊອກຮູ້ແລະ ກຳແໜ້ນເປົ້າໝາຍນຳໃຊ້, ຈຸດປະສົງຂອງການນຳໃຊ້ໂຄງຮ່າງເພື່ອສາມາດໃຫ້ຄຳແນະນຳ, ທິດຊີ້ນຳວິທີການ, ມາດຕະການໂຄສະນາທີ່ເໝາະສົມ;

**ຂັ້ນຕອນທີ 4**: ຄົ້ນຄວ້າສະພາບທາງດ້ານເສດຖະກິດ, ສັງຄົມ, ຮີດຄອງ, ມູນເຊື້ອ, ສະພາບການລະເມີດກົດໝາຍ, ຄວາມຕ້ອງການໃນການຄຸ້ມຄອງຕໍ່ຂົງເຂດທີ່ກ່ຽວຂ້ອງໃນນິຕິກຳນັ້ນເພື່ອໄຈ້ແຍກເບິ່ງວ່າບັນຫາຕ່າງໆທີ່ຍົກຂຶ້ນມາຢູ່ໃນນິຕິກຳ ສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງສັງຄົມແລະຂອງການຄຸ້ມຄອງແລ້ວຫຼືບໍ່, ປະກອບສ່ວນເຂົ້າໃນການສະກັດກັ້ນການລະເມີດກົດໝາຍ ໃນຂົງເຂດນັ້ນຄືແນວໃດ;

**ຂັ້ນຕອນທີ 5**: ແຕ່ງ (ສ້າງ) ໂຄງຮ່າງ. ກ່ອນຈະຂຽນໂຄງຮ່າງສົມບູນນັ້ນປົກກະຕິຈະສ້າງໂຄງປະກອບຂອງໂຄງຮ່າງແລ້ວນຳສະເໜີການນຳຂອງຕົນ, ເມື່ອການນຳຜ່ານໃຫ້ແລ້ວກໍສາມາດ:

- ຂຽນໂຄງຮ່າງບົດໂຄສະນາໂດຍກົງໂດຍອີງໃສ່ພື້ນຖານໂຄງປະກອບຂອງໂຄງຮ່າງແລະເອກະສານຕ່າງໆທີ່ໄດ້ຄົ້ນຄວ້າມາແລ້ວ;

- ສົມທົບກັບອົງການທີ່ເຂົ້າຮ່ວມການຮ່າງນິຕິກຳນັ້ນເພື່ອສະເໜີ ໃຫ້ເຂົາເຈົ້າຊ່ວຍຂຽນຕາມໂຄງປະກອບຂອງໂຄງຮ່າງ.

**ຂັ້ນຕອນທີ 6**: ກວດແກ້ບົດໂຄງຮ່າງ.

**ຂັ້ນຕອນທີ 7**: ສຳເລັດບົດໂຄງຮ່າງ, ພິມ ແລະ ສົ່ງໃຫ້ເປົ້າໝາຍຕ່າງໆນຳໃຊ້[1].

### 3. ຂັ້ນຕອນການນຳສະເໜີ, ບັນຍາຍ

#### 1) ຂັ້ນຕອນກະກຽມ

ນັກໂຄສະນາຕ້ອງລວບລວມບັນດາຂໍ້ມູນ ແລະ ເນື້ອໃນເອກະສານທີ່ຈະບັນຍາຍຕາມລຳດັບຈັດເປັນໝວດໝູ່ ແລະ ລຳດັບຄວາມຍາກງ່າຍຂອງຫົວຂໍ້ທີ່ຈະບັນຍາຍ, ຖ້າຫາກບັນຍາຍໃນຫົວຂໍ້ຂອງກົດໝາຍອາຍາ ຫຼື ກົດໝາຍອື່ນກໍຄວນເລືອກເຟັ້ນເອົາບາງມາດຕາທີ່ພົວພັນກັບບັນຫາ ຫຼື ປະກົດການຫຍໍ້ທໍ້ທີ່ມັກເກີດຂຶ້ນໃນສັງຄົມຂອງທ້ອງຖິ່ນນັ້ນ ເພື່ອດຶງດູດຄວາມສົນໃຈຂອງເປົ້າໝາຍ. ການຈັດຫາອຸປະກອນທີ່ຈະນຳໃຊ້ປະກອບກັບການບັນຍາຍກໍຄວນໃຫ້ເໝາະສົມເຊັ່ນ ຢູ່ທ້ອງຖິ່ນເຂດຫ່າງໄກສອກຫຼີກບໍ່ທັນມີໄຟຟ້າກໍຄວນຊອກຫາອຸປະກອນຢ່າງອື່ນທີ່ເໝາະສົມເປັນຕົ້ນປຶກເຟີດ, ກະດານ, ເຈ້ຍຂາວແຜ່ນໃຫຍ່, ຮູບພາບປະກອບ ແລະ ອື່ນໆ.

#### 2) ຂັ້ນຕອນບັນຍາຍ

ກ່ອນຈະເຂົ້າເຖິງເນື້ອໃນຂອງການບັນຍາຍ ນັກໂຄສະນາຕ້ອງກ່າວເປີດກ່ອນສະເໜີ, ອັນສຳຄັນຕ້ອງໃຫ້ກຳໄດ້ຊື່,ນາມສະກຸນ ແລະ ຕຳແໜ່ງຂອງປະທານເພື່ອຈະໄດ້ເອີ້ນຊື່ ແລະ ຕຳແໜ່ງເພິ່ນຢ່າງຖືກຕ້ອງທັງເປັນການໃຫ້ກຽດແກ່ເຈົ້າພາບ. ການດຳເນີນການບັນຍາຍ ແມ່ນບັນຍາຍຕາມເນື້ອໃນເອກະສານທີ່ໄດ້ກະກຽມ, ອະທິບາຍໃຫ້ຈະແຈ້ງຊັດເຈນ ແລະ ຍົກຕົວຢ່າງບັນດາເຫດການ ຫຼື ປະກົດການຫຍໍ້ທໍ້ທີ່ມັກເກີດຂຶ້ນເຊັ່ນ ການລັກຊັບພົນລະເມືອງ, ຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ການແບ່ງປັນມູນມໍຣະດົກ... ມາປະກອບພ້ອມທັງເປີດໂອກາດໃຫ້ເປົ້າໝາຍໄດ້ຊັກຖາມຂໍ້ກົດໝາຍທີ່ເຂົາເຈົ້າຍັງບໍ່ທັນຮັບຮູ້ ແລະ ເຂົ້າໃຈ.

#### 3) ຂັ້ນຕອນສະຫຼຸບ

ເພື່ອຮັບປະກັນໃຫ້ເປົ້າໝາຍທີ່ມາຟັງການບັນຍາຍສາມາດກຳໄດ້ເນື້ອໃນຈິດໃຈຂອງເອກະສານ, ນັກໂຄສະນາຕ້ອງສະຫຼຸບ ແລະ ທົບທວນຄືນສິ່ງທີ່ໄດ້ນຳສະເໜີໄປ ຊຶ່ງເປັນການສະຫຼຸບສັງລວມ ແລະ ທົບທວນຄືນ ເນື້ອໃນຈິດໃຈທີ່ເປັນຕົບເປັນບີຂອງເອກະສານທີ່ນັກໂຄສະນານຳມາບັນຍາຍ ເພື່ອໃຫ້ເປົ້າໝາຍໄດ້ຈົດກ່າຍບັນທຶກໄວ້. ການສະຫຼຸບໂດຍທົ່ວໄປແລ້ວແມ່ນມີສອງຮູບແບບຄື ການສະຫຼຸບດ້ວຍການຂຽນ ແລະ ສະຫຼຸບດ້ວຍວາຈາ.

-ການສະຫຼຸບດ້ວຍການຂຽນມັກຈະມາກ່ອນການສະຫຼຸບດ້ວຍວາຈາສະເໜີ ແລະ ການສະຫຼຸບດ້ວຍການຂຽນຄືຮ່າງຂອງການສະຫຼຸບດ້ວຍວາຈາ. ການສະຫຼຸບດ້ວຍການຂຽນຕ້ອງຂຽນເນື້ອໃນໃຫ້ລະອຽດຈະແຈ້ງ, ຖືກຫຼັກໄວຍະກອນ, ບໍ່ຊໍ້າໄປຊໍ້າມາ ແລະ ຕ້ອງໃຫ້ສັ້ນກະທັດຮັດຕ່າງຈາກການສະຫຼຸບດ້ວຍວາຈາຊຶ່ງຜູ້ບັນຍາຍນຳໃຊ້ພາສາເວົ້າທີ່ມີລັກສະນະສ່ວນຕົວ ແລະ ອາດເວົ້າຊໍ້າໄປຊໍ້າມາກໍໄດ້.

---

[1]ປອ ຈອມຄຳ ບຸບຜາລີວັນ,ປຶ້ມຄູ່ມືວຽກງານເຜີຍແຜ່ກົດໝາຍ ປີ 2008, ໜ້າ 25.

-ການສະຫຼຸບດ້ວຍວາຈາ ຫຼື ການເວົ້າແມ່ນການສະຫຼຸບຄືນຕາມໂຄງຮ່າງທີ່ໄດ້ກະກຽມ, ສິ່ງສຳຄັນໃນການສະຫຼຸບດ້ວຍການເວົ້ານັ້ນຜູ້ບັນຍາຍຕ້ອງເວົ້າໃຫ້ຈະແຈ້ງຊັດເຈນ, ສະຫຼຸບບັນຫາທີ່ເປັນເນື້ອໃນໃຫ້ຊັດເຈນ ແລະ ເວົ້າໃຫ້ສັ້ນກະທັດຮັດ, ໃຊ້ເວລາບໍ່ຫຼາຍ. ສະນັ້ນ, ຜູ້ບັນຍາຍມີຄວາມຈຳເປັນຢ່າງຍິ່ງຕ້ອງຂຽນຮ່າງຂໍ້ຄວາມທີ່ຈະສະຫຼຸບໄວ້ລ່ວງໜ້າເພື່ອນຳຂໍ້ຄວາມນັ້ນມາສຶກສາໃຫ້ເຂົ້າໃຈຢ່າງເລິກເຊິ່ງແລ້ວຈຶ່ງນຳໄປບັນຍາຍສະຫຼຸບໄດ້ຢ່າງຄ່ອງແຄ້ວ, ໜ້າຟັງ ແລະ ບໍ່ອອກນອກເລື່ອງ.

**4) ຂັ້ນຕອນປະເມີນຜົນ**

ການປະເມີນຜົນແມ່ນການລວບລວມຂໍ້ມູນທີ່ກ່ຽວກັບຜົນຂອງການດຳເນີນງານເພື່ອນຳມາປຽບທຽບກັບຈຸດປະສົງທີ່ຜູ້ບັນຍາຍໄດ້ຕັ້ງເປົ້າເອົາໄວ້ວ່າໄດ້ຜົນຕາມທີ່ກຳນົດໄວ້ໜ້ອຍຫຼາຍພຽງໃດ,ການປະເມີນຜົນມີບົດບາດສຳຄັນໃນຂະບວນການເຜີຍແຜ່ກົດໝາຍເພາະການປະເມີນແມ່ນບົ່ງຊີ້ໃຫ້ຮູ້ວ່າແຕ່ລະເປົ້າໝາຍທີ່ຜ່ານການໂຄສະນານັ້ນເຂົາເຈົ້າຮັບຮູ້ ແລະ ເຂົ້າໃຈໄດ້ໜ້ອຍຫຼາຍປານໃດ. ສະນັ້ນ, ຜູ້ບັນຍາຍຕ້ອງສັງເກດຄວາມສົນໃຈ, ຄວາມເຂົ້າໃຈຂອງເປົ້າໝາຍຕໍ່ເນື້ອໃນເອກະສານທີ່ໄດ້ນຳສະເໜີໄປໂດຍວິທີຕ່າງໆທີ່ເໝາະສົມ ເຊັ່ນ ການຕັ້ງຄຳຖາມ, ການສຳພາດ, ການໃຫ້ແບບທົດສອບເຫຼົ່ານີ້ເປັນຕົ້ນ.

**4. ຄວາມໝາຍ ແລະ ຄວາມສຳຄັນຂອງການໂຄສະນາເຜີຍແຜ່ກົດໝາຍດ້ວຍປາກເປົ່າ**

**4.1. ຄວາມໝາຍ**

ການໂຄສະນາເຜີຍແຜ່ກົດໝາຍທາງປາກເປົ່າ ແມ່ນການເວົ້າໂດຍກົງ ຂອງພະນັກງານ ໂຄສະນາເຜີຍແຜ່ກົດໝາຍຕໍ່ຜູ້ຟັງ ກ່ຽວກັບເນື້ອໃນ ຫຼື ບັນຫາໃດໜຶ່ງຂອງກົດໝາຍ ແນໃສ່ຍົກສູງ ຄວາມຮູ້, ຄວາມເຂົ້າໃຈ, ຄວາມເຊື່ອໝັ້ນຕໍ່ກົດໝາຍ ແລະ ຊຸກຍູ້ໃຫ້ຜູ້ຟັງ ເຄື່ອນໄຫວຕາມຈຸດປະສົງຂອງກົດໝາຍ.

**4.2. ຄວາມສຳຄັນ**

- ໂດຍອີງໃສ່ເງື່ອນໄຂສະພາບຈຸດພິເສດຂອງປະເທດເຮົາໃນປັດຈຸບັນ ເຫັນວ່າການດຳລົງຊີວິດ ຂອງປະຊາຊົນຍັງຢູ່ກະແຈກກະຈາຍ, ເຂດຊົນນະບົດ ຫຼື ເຂດພູດອຍຍັງມີຈຳນວນບໍ່ໜ້ອຍ, ເຮັດໃຫ້ການຕິດຕໍ່ພົວພັນພົບຄວາມຫຍຸ້ງຍາກ;

- ການຕອບສະໜອງແຫຼ່ງຂໍ້ມູນ ຂ່າວສານດ້ານກົດໝາຍໃຫ້ປະຊາຊົນ ຍັງຈຳກັດ;

- ການໂຄສະນາເຜີຍແຜ່ກົດໝາຍຜ່ານສື່ມວນຊົນ ຍັງບໍ່ຮັບປະກັນໄດ້ລັກສະນະຄວາມວ່ອງໄວ, ຫຼາຍຮູບ ຫຼາຍສີ ຫຼາຍວິທີການ, ທົ່ວເຖິງ, ເປົ້າໝາຍຮັບຮູ້, ເຂົ້າໃຈ ແລະ ມີສະຕິຕື່ນຕົວເຄົາລົບປະຕິບັດກົດໝາຍຢ່າງ ເຂັ້ມງວດ;

- ເງື່ອນໄຂຄວາມອາດສາມາດຂອງປະຊາຊົນຈຳນວນໜຶ່ງ ຍັງມີຂອບເຂດຈຳກັດໃນການເຂົ້າເຖິງສື່ໂຄສະນາເຜີຍແຜ່ກົດໝາຍດ້ວຍຕົວເອງ.

ສະນັ້ນ, ພະນັກງານໂຄສະນາເຜີຍແຜ່ກົດໝາຍທາງປາກເປົ່າ ແມ່ນຂໍ້ຕໍ່ທີ່ສຳຄັນໃຫ້ແກ່ລັດໃນການເຮັດໜ້າທີ່ຈັດຕັ້ງຜັນຂະຫຍາຍ ແນວທາງຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ກົດໝາຍໃຕ້ກົດໝາຍ ໃຫ້ເຂົ້າເຖິງຮາກຖານຢ່າງທົ່ວເຖິງ[2].

---

[2] ຄະນະໂຄສະນາອົບຮົມສູນກາງພັກ, ປຶ້ມຄູ່ມືວຽກງານໂຄສະນາ, ປີ 2016, ໜ້າ 4

ການໂຄສະນາເຜີຍແຜ່ກົດໝາຍທາງປາກເປົ່າ ຍັງເປັນເຄື່ອງມືທີ່ສຳຄັນຂອງລັດໃນການສຶກສາອົບຮົມ, ໂຄສະນາເຜີຍແຜ່ກົດໝາຍໄດ້ທຸກເປົ້າໝາຍ.

**5. ຄວາມໝາຍ, ຄວາມສຳຄັນຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານສື່ມວນຊົນ**

**5.1. ຄວາມໝາຍ**

ການໂຄສະນາເຜີຍແຜ່ກົດໝາຍຜ່ານສື່ມວນຊົນ ແມ່ນການນຳເອົາ ຂໍ້ມູນຂ່າວສານທາງດ້ານກົດໝາຍບັນຈຸເຂົ້າໃນສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ ເພື່ອເຮັດໃຫ້ພົນລະເມືອງ ສາມາດເຂົ້າເຖິງກົດໝາຍໄດ້ງ່າຍ, ສະດວກ ແລະ ວ່ອງໄວ.

**5.2. ຄວາມສຳຄັນ**

ສື່ມວນຊົນເປັນພາຫະນະໂຄສະນາເຜີຍແຜ່ກົດໝາຍທີ່ມີປະສິດທິຜົນສູງ, ເປັນກະບອກສຽງຂອງອົງການຈັດຕັ້ງພັກ, ລັດ ແລະ ສັງຄົມໃນການໂຄສະນາ, ສຶກສາອົບຮົມແນວທາງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດໃຫ້ແກ່ສັງຄົມໄດ້ຮັບຮູ້, ເຂົ້າໃຈ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ;  ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນ ສັງຄົມ ແລະ ຖ້ອຍທຳນອງທີ່ບິດເບືອນຄວາມເປັນຈິງ;ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳໃນສັງຄົມ.

**6. ຄວາມໝາຍ ແລະ ຄວາມສຳຄັນຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກຳ**

**6.1. ຄວາມໝາຍ**

ການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກຳ ແມ່ນການນຳເອົາກົດໝາຍຕົ້ນສະບັບມາຈັດພິມເປັນປຶ້ມ, ເປັນຕົ້ນວ່າ ປຶ້ມກົດໝາຍ, ປຶ້ມສັງລວມກົດໝາຍ, ປຶ້ມສັງລວມນິຕິກຳໃຕ້ກົດໝາຍ, ປຶ້ມປະມວນກົດໝາຍ ແລະ ປຶ້ມນິຕິກຳໃຕ້ກົດໝາຍອື່ນໆ ເພື່ອແຈກຢາຍ, ຈຳໜ່າຍ, ນຳໃຊ້ເຂົ້າໃນວຽກງານໂຄສະນາເຜີຍແຜ່ກົດໝາຍ, ການສຶກສາຄົ້ນຄວ້າ, ການຈັດຝຶກອົບຮົມ ແລະ ອື່ນໆ.

ຮູບແບບການໂຄສະນາເຜີຍແຜ່ກົດໝາຍໃນລັກສະ ນີ້ມີຈຸດພິເສດ ແລະ ບໍ່ໃຊ້ກຳລັງຄົນໂດຍກົງເຂົ້າຮ່ວມໃນການໂຄສະນາ ແຕ່ເປັນການໝູນໃຊ້ຜະລິດຕະພັນທີ່ຈັດພິມ ເພື່ອເປັນເຄື່ອງມືໃນການໂຄສະນາເຜີຍແຜ່ກົດໝາຍຜ່ານການແຈກຢາຍ, ຈຳໜ່າຍຜະລິດຕະພັນທີ່ຈັດພິມຄື: ປຶ້ມກົດໝາຍ, ປຶ້ມສັງລວມກົດໝາຍ, ປຶ້ມສັງລວມນິຕິກຳໃຕ້ກົດໝາຍ, ປຶ້ມປະມວນກົດໝາຍ ແລະ ປຶ້ມນິຕິກຳໃຕ້ກົດໝາຍ.

ການໂຄສະນາເຜີຍແຜ່ກົດໝາຍຜ່ານພິມປຶ້ມນິຕິກຳ ນຳຄວາມໝາຍພິເສດມາໃຫ້ຜູ້ອ່ານເຊັ່ນ: ການອ່ານໜັງສືກົດໝາຍຊ່ວຍປັບປຸງຄວາມຮູ້,  ປຶ້ມນິຕິກຳແມ່ນປຶ້ມປະເພດໜຶ່ງສະເພາະ, ສະໜອງຄວາມຮູ້ທີ່ມີປະໂຫຍດຫຼາຍຢ່າງໃຫ້ແກ່ຜູ້ອ່ານ. ນີ້ແມ່ນແຫຼ່ງຄວາມຮູ້ທີ່ສັງລວມບັນດາລະບຽບການ ແລະ ກົດໝາຍໃນຮູບແບບຂອງ ສປປລາວ.

ຄວາມໝາຍຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກຳ ຍັງສະທ້ອນໃຫ້ເຫັນ ວ່າການອ່ານປຶ້ມນິຕິກຳ ແມ່ນຄວາມຈຳເປັນຂອງທຸກໆຄົນ, ຈຸດປະສົງໃນການຄົ້ນຫາຂໍ້ມູນທີ່ເປັນປະໂຫຍດເພື່ອຮັບໃຊ້ວຽກງານການສຶກສາ ແລະ ຄົ້ນຄວ້າ.

ຄວາມໝາຍຂອງປຶ້ມນິຕິກຳໃຫ້ຜູ້ອ່ານໄດ້ຄວາມຮູ້ທີ່ເປັນປະໂຫຍດຫຼາຍ. ການນຳໃຊ້ປຶ້ມເພື່ອປູກຝັງແນວຄິດຂອງຕົນເອງເປັນສິ່ງຈຳເປັນ, ປຶ້ມນິຕິກຳທີ່ມີຄວາມໝາຍພິເສດຕໍ່ຜູ້ອ່ານເຊັ່ນ:

ປຶ້ມນິຕິກຳ ( ປຶ້ມກົດໝາຍ ) ແມ່ນປຶ້ມປະເພດໜຶ່ງສະເພາະ, ສະໜອງຄວາມຮູ້ທີ່ມີປະໂຫຍດຫຼາຍຢ່າງໃຫ້ແກ່ຜູ້ອ່ານ, ນີ້ແມ່ນແຫຼ່ງຄວາມຮູ້ທີ່ສັງລວມບັນດາລະບຽບການ ແລະ ກົດໝາຍ. ດັ່ງນັ້ນ, ມັນຈະຊ່ວຍໃຫ້ທ່ານປັບປຸງ ແລະ ຂະຫຍາຍຄວາມຮູ້ຂອງທ່ານ.

ໃນເວລາທີ່ທ່ານອ່ານປຶ້ມນິຕິກຳ ແລະ ດູດຊຶມຂໍ້ມູນ, ຈະເຮັດໃຫ້ງ່າຍຕໍ່ການປະຕິບັດໜ້າທີ່ວຽກງານ ໃນຫຼາຍໆກໍລະນີ, ການແຊກແຊງທາງດ້ານກົດຫມາຍແມ່ນຈຳເປັນ, ດັ່ງນັ້ນທ່ານຈະບໍ່ແປກໃຈ. ຈາກນັ້ນ, ບັນຫາທີ່ຂັດແຍ່ງກັນສາມາດແກ້ໄຂໄດ້ຢ່າງວ່ອງໄວ, ເອົາຄວາມສະດວກສະບາຍໃຫ້ກັບຄົນຈຳນວນຫຼາຍ, ບໍ່ເຮັດໃຫ້ເກີດການຂັດແຍ້ງ ຫຼື ການໂຕ້ຖຽງ.

ແຕ່ລະຄົນທີ່ອ່ານປຶ້ມນິຕິກຳ ຕາມແນວຄິດຂອງຕົນເອງຈະເຫັນເນື້ອໃນ ໃນປຶ້ມຈາກດ້ານຕ່າງໆ, ຄວາມສຳຄັນຂອງປຶ້ມແມ່ນສາມາດຊ່ວຍໃຫ້ຜູ້ອ່ານພັດທະນາຄວາມຄິດສ້າງສັນຂອງພວກເຂົາ ຈາກບ່ອນນັ້ນ, ນຳໃຊ້ຄວາມຮູ້ໃນປຶ້ມນັ້ນໄປໃຊ້ໃນການປະຕິບັດຕົວຈິງເພື່ອຈັດການກັບສະຖານະການຕ່າງໆ.

ການອ່ານປຶ້ມນິຕິກຳ ຈະຊ່ວຍໃຫ້ທ່ານກຳຈັດນິດໄສທີ່ບໍ່ດີ ແລະ ສ້າງນິດໄສໃຫມ່, ປຶ້ມແມ່ນແຫຼ່ງຄວາມຮູ້ທີ່ບໍ່ມີທີ່ສິ້ນສຸດ, ດັ່ງນັ້ນບໍ່ມີເຫດຜົນໃດ ສຳລັບຄົນທີ່ຈະປະຕິເສດມັນ.

**6.2. ຄວາມສຳຄັນ**

ຄວາມສຳຄັນໃນການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກຳ ສຳລັບ ສປປ ລາວ ແມ່ນມີດັ່ງນີ້:

ການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກຳ ແມ່ນມີຄວາມສຳຄັນຫຼາຍ ຊຶ່ງເປັນອີກວິທີໜຶ່ງ ທີ່ເຮັດໃຫ້ທຸກຊັ້ນຄົນສາມາດເຂົ້າເຖິງກົດໝາຍໄດ້ດ້ວຍການອ່ານປຶ້ມກົດໝາຍ ເພາະວ່າປະຊາຊົນຈຳນວນຫຼວງຫຼາຍໂດຍສະເພາະ ຢູ່ ສປປ ລາວ ຍັງບໍ່ທັນມີເຄື່ອງມືທີ່ທັນສະໄໝ ແລະ ບໍ່ທັນຮູ້ວິທີຊອກຫາກົດໝາຍ ຜ່ານສື່ເອເລັກໂຕຣນິກ. ສະນັ້ນ, ປຶ້ມນິຕິກຳ ຈຶ່ງເປັນທາງເລືອກໜຶ່ງທີ່ສາມາດອ່ານໄດ້ທຸກເວລາ ແລະ ພົກພາງ່າຍເພາະກົດໝາຍມັນກ່ຽວພັນກັບການ ດຳລົງຊີວິດຂອງປະຊາຊົນໂດຍກົງ, ຖ້າໃຜລະເມີດກົດໝາຍກໍຈະຖືກລົງໂທດຕາມກົດໝາຍ, ຖ້າທຸກຄົນຮັບຮູ້, ເຂົ້າໃຈ ສະຕິເຄົາລົບ ແລະ ປະຕິບັດກົດໝາຍ ໃນສັງຄົມກໍຈະສູງຂຶ້ນ.

ປັດຈຸບັນຢູ່ ສປປ ລາວ ຢູ່ເຂດຊົນນະບົດ, ເຂດຫ່າງໄກສອກຫຼີກແມ່ນມີຄວາມຕ້ອງການປຶ້ມນິຕິກຳ ເພື່ອຄົ້ນຄວ້າ ແລະ ສຶກສາ, ທັງຍັງເປັນເຄື່ອງມືຫຼັກໃນການໂຄສະນາເຜີຍແຜ່ກົດໝາຍ, ໃນຂະແໜງການຍຸຕິທຳຂອງລາວ ໃນຂອບເຂດທົ່ວປະເທດພວມໃຊ້ຮູບແບບການໂຄສະນາໃຫ້ບັນດາໝູບ້ານຢູ່ຂັ້ນຮາກຖານດ້ວຍວິທີການສ້າງຕູ້ປຶ້ມກົດໝາຍປະຈຳຢູ່ຫ້ອງການປົກຄອງບ້ານ ເພື່ອບັນຈຸບັນດາປຶ້ມນິຕິກຳປະເພດຕ່າງໆໄວ້ໃຫ້ປະຊາຊົນພາຍໃນໝູ່

ບ້ານໄດ້ຄົ້ນຄວ້າ ແລະ ຮໍ່າຮຽນ, ການດໍາເນີນການແບບນີ້ ໄດ້ຮັບຜົນຫຼາຍ ແລະ ມີປະໂຫຍດ, ເປັນການປະກອບສ່ວນເຂົ້າໃນການໂຄສະນາເຜີຍແຜ່ກົດໝາຍໄດ້ຢ່າງທົ່ວເຖິງ.

ການເຜີຍແຜ່ ແລະ ສຶກສາກົດໝາຍຜ່ານປຶ້ມ, ໜັງສືພິມ ແລະ ເອກະສານໂຄສະນາເຜີຍແຜ່ກົດໝາຍແມ່ນມາດຕະການທີ່ມີຄວາມໄດ້ປຽບຫຼາຍຢ່າງ. ສ້າງເງື່ອນໄຂສະດວກໃຫ້ປະຊາຊົນໃນການຮໍ່າຮຽນ ແລະ ຄົ້ນຄ້ວາຜ່ານປຶ້ມນິຕິກໍາ.

ສະນັ້ນ, ພວກເຮົາຈຶ່ງສາມາດເວົ້າໄດ້ວ່າ ການນໍາໃຊ້ສິ່ງສືພິມເຂົ້າໃນການສື່ສານເວົ້າລວມ ແລະ ເວົ້າສະເພາະກໍຄືເຂົ້າໃນການໂຄສະນາເຜີຍແຜ່ກົດໝາຍ ແມ່ນມີຄວາມຈໍາເປັນ ແລະ ສໍາຄັນເປັນຢ່າງຍິ່ງ, ເຫັນໄດ້ຄວາມສໍາຄັນຄືແນວນັ້ນ ລັດຖະບານລາວ ຈຶ່ງໄດ້ກໍານົດວ່າການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນໍາຕິກໍາ ເປັນໜຶ່ງໃນຮູບແບບການໂຄສະນາເຜີຍແຜ່ກົດໝາຍທີ່ມີປະສິດທິຜົນ.

**7. ຄວາມໝາຍ ຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານການສຶກສາຢູ່ໃນສະຖານການສຶກສາ**

ການໂຄສະນາເຜີຍແຜ່ກົດໝາຍຜ່ານການສຶກສາຢູ່ໃນສະຖານການສຶກສາຢູ່ໃນສະຖານການສຶກສາ ແມ່ນການຊີ້ແຈງ,ອະທິບາຍ ຫຼື ບັນຍາຍເນື້ອໃນກົດໝາຍໃຫ້ແກ່ນັກຮຽນ, ນັກສຶກສາ ໂດຍຜ່ານການຮຽນ - ການສອນຢ່າງເປັນລະບົບ.

ກະຊວງ, ອົງການ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ສານປະຊາຊົນສູງສຸດແລະອົງການໄອຍະການປະຊາຊົນສູງສຸດຕ້ອງຄົ້ນຄວ້າ ແລະ ນໍາສະເໜີກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຕໍ່ກະຊວງສຶກສາທິການ ແລະ ກິລາ ເພື່ອບັນຈຸເຂົ້າໃນຫຼັກສູດການຮຽນ-ການສອນ ຂອງສາຍສາມັນສຶກສາ, ອາຊີວະສຶກສາແລະການສຶກສາຊັ້ນສູງ.

ການໂຄສະນາເຜີຍແຜ່ກົດໝາຍສໍາລັບສາຍສາມັນສຶກສາ ຊັ້ນປະຖົມສຶກສາ ຕ້ອງສຸມໃສ່ກົດໝາຍເປັນຕົ້ນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ການໂຄສະນາເຜີຍແຜ່ກົດໝາຍສໍາລັບສາຍສາມັນສຶກສາ ຊັ້ນມັດທະຍົມຕອນຕົ້ນ, ຕອນປາຍຕ້ອງສຸມໃສ່ນໍາລັດຖະທໍາມະນູນ,ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກົດໝາຍວ່າດ້ວຍຢາເສບຕິດ, ກົດໝາຍວ່າດ້ວຍການດໍາເນີນຄະດີເດັກ, ກົດໝາຍວ່າດ້ວຍການຈະລາຈອນທາງບົກ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ການໂຄສະນາເຜີຍແຜ່ກົດໝາຍສໍາລັບສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງຕ້ອງສຸມໃສ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນແຕ່ລະໄລຍະ ມາໂຄສະນາເຜີຍແຜ່ໃຫ້ແກ່ນັກຮຽນ, ນັກສຶກສາ.

ສະຖານການສຶກສາທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບໃນການໂຄສະນາເຜີຍແຜ່ກົດໝາຍໃຫ້ແກ່ນັກຮຽນ, ນັກສຶກສາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**8. ຄວາມໝາຍຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານການທົດສອບຄວາມຮູ້ດ້ານກົດໝາຍ**

ການໂຄສະນາເຜີຍແຜ່ກົດໝາຍ ຫຼື ນິຕິກໍາ ຜ່ານການທົດສອບຄວາມຮູ້ດ້ານກົດໝາຍ ແມ່ນການຈັດກິດຈະກໍາຕ່າງໆ ເພື່ອທົດສອບຄວາມຮູ້ດ້ານກົດໝາຍ ໂດຍອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ ແລະ ເອກະຊົນ ຊຶ່ງ

ໃຫ້ຜູ້ທີ່ມີຄວາມສົນໃຈ ຕອບເປັນລາຍລັກອັກສອນ ຫຼື ປາກເປົ່າ ກ່ຽວກັບກົດໝາຍໃດໜຶ່ງ ແນໃສ່ຊຸກຍູ້, ສົ່ງເສີມ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບກົດໝາຍ ໃຫ້ແກ່ພົນລະເມືອງ[3].

ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ ການໂຄສະນາເຜີຍແຜ່ກົດໝາຍຜ່ານການທົດສອບຄວາມຮູ້ດ້ານການໝາຍ ແມ່ນຮູບການໂຄສະນາເຜີຍແຜ່ກົດໝາຍໂດຍອີງໃສ່ເອົາເປົ້າໝາຍທີ່ຕ້ອງການເປັນຫຼັກໃນການສະແດງຄຳຄິດເຫັນ ຫຼື ການຊອກຮູ້ເຂົ້າໃຈກົດໝາຍ, ສ້າງຄວາມກະຕືລືລົ້ນໃຫ້ຜູ້ຟັງເປັນເຈົ້າການໃນການຊອກຮູ້ ແລະ ທຳຄວາມເຂົ້າໃຈກົດໝາຍດ້ວຍຕົນເອງ, ຜ່ານການປະຕິບັດກິດຈະກຳຕ່າງໆໃນການທົດສອບຄວາມຮູ້ດ້ານກົດໝາຍສາມາດປະເມີນໄດ້ ຄວາມຮັບຮູ້ ແລະ ເຂົ້າໃຈກົດໝາຍຈາກຜູ້ໄດ້ຮັບການທົດສອບຄວາມຮູ້ທາງດ້ານກົດໝາຍ.

**9. ຄວາມໝາຍຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານການນຳໃຊ້ຕູ້ປຶ້ມກົດໝາຍປະຈຳບ້ານ ແລະ ຫໍສະໝຸດ**

ການໂຄສະນາເຜີຍແຜ່ນິຕິກຳ ຜ່ານການນຳໃຊ້ຕູ້ປຶ້ມກົດໝາຍປະຈຳບ້ານ ແລະ ຫໍສະໝຸດ ແມ່ນການປະກອບປຶ້ມກົດໝາຍ, ລະບຽບການຕ່າງໆ ລວມທັງເອກະສານທາງດ້ານກົດໝາຍ ເຂົ້າໃສ່ຕູ້ປຶ້ມກົດໝາຍປະຈຳບ້ານ ແລະ ຫໍສະໝຸດ ເພື່ອສະໜອງຂໍ້ມູນ ຂ່າວສານດ້ານກົດໝາຍ ໃຫ້ແກ່ພົນລະເມືອງ ໄດ້ຄົ້ນຄວ້າ ແລະ ນຳໃຊ້ ຢ່າງທົ່ວເຖິງ[4].

ກະຊວງ, ອົງການ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຕ້ອງສະໜອງຂໍ້ມູນຂ່າວສານດ້ານກົດໝາຍໃສ່ຕູ້ປຶ້ມກົດໝາຍປະຈຳບ້ານ ແລະ ຫໍສະໝຸດ ຢ່າງເປັນລະບົບ.

ຂະແໜງການຍຸຕິທຳ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອສ້າງ, ຄຸ້ມຄອງ ແລະນຳໃຊ້ຕູ້ປຶ້ມກົດໝາຍປະຈຳບ້ານ.

**10. ຄວາມໝາຍຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍ**

ການໂຄສະນາເຜີຍແຜ່ກົດໝາຍຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍ ແມ່ນການຕອບຂໍ້ຂ້ອງໃຈ, ໃຫ້ຄຳປຶກສາ ແລະ ແນະນຳທາງດ້ານກົດໝາຍທາງປາກເປົ່າ ຫຼື ເປັນລາຍລັກອັກສອນກ່ຽວກັບຫຼັກການ, ລະບຽບການ ແລະ ມາດຕະການຂອງກົດໝາຍ ໃຫ້ແກ່ຜູ້ຮ້ອງຂໍ ຫຼື ສະເໜີຂໍຄຳປຶກສາທາງດ້ານກົດໝາຍໄດ້ຮັບຮູ້ ແລະ ເຂົ້າໃຈກົດໝາຍ, ຊ່ວຍໃຫ້ປະຊາຊົນ ສາມາດເຂົ້າເຖິງ ແລະ ນຳໃຊ້ກົດໝາຍ ເຂົ້າໃນພຶດຕິກຳຕົວຈິງ ໄດ້ຢ່າງຖືກຕ້ອງ[5].

ລັດແຫ່ງ ສປປ ລາວ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ກົດໝາຍຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍດ້ວຍການກຳນົດນະໂຍບາຍ, ນິຕິກຳ, ການສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ, ສະຖານທີ່ເຮັດວຽກ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ.

ລັດຊຸກຍູ້, ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນວຽກງານໃຫ້ຄຳປຶກສາທາງດ້ານກົດໝາຍ ຫຼື ເອີ້ນວ່າການຊ່ວຍເຫຼືອທາງດ້ານກົດໝາຍ.

---

[3]ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020, ໝວດທີ 2, ມາດຕາ 15.

[4]ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020, ໝວດທີ 2, ມາດຕາ 16.

[5]ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020, ໝວດທີ 2, ມາດຕາ 17.

**11. ຄວາມໝາຍຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຢູ່ຂັ້ນບ້ານ ແລະ ການແກ້ໄຂຄຳຮ້ອງທຸກ**

ການໂຄສະນາເຜີຍແຜ່ກົດໝາຍ ຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ການແກ້ໄຂຄຳຮ້ອງທຸກ ແມ່ນການສຶກສາອົບຮົມ, ຕອບຂໍ້ຂ້ອງໃຈ, ໃຫ້ຄຳປຶກສາ, ແນະນຳ ຫຼື ສະໜອງຄວາມຮູ້ກ່ຽວກັບກົດໝາຍ ໃຫ້ແກ່ຄູ່ກໍລະນີທີ່ຂັດແຍ່ງກັນ ໂດຍຜ່ານການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການແກ້ໄຂຄຳຮ້ອງທຸກ ແນໃສ່ເຮັດໃຫ້ເຂົາເຈົ້າມີຄວາມຮັບຮູ້, ເຂົ້າໃຈ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ[6].

ການໂຄສະນາເຜີຍແຜ່ກົດໝາຍ ຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຢູ່ຂັ້ນບ້ານ ແລະ ການແກ້ຄຳຮ້ອງທຸກ ແມ່ນການສຶກສາອົບຮົມທາງດ້ານ ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ໃຫ້ແກ່ປະຊາຊົນບັນດາເຜົ່າຢູ່ພາຍ ໃນບ້ານ ໂດຍສະເພາະ ແມ່ນຄູ່ກໍລະນີທີ່ຂັດແຍ່ງກັນ.

**12. ຄວາມໝາຍຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານວັດທະນະທຳ ແລະ ສິລະປະ**

ການໂຄສະນາເຜີຍແຜ່ກົດໝາຍຜ່ານວັດທະນະທຳ ແລະ ສິລະປະ ແມ່ນການນຳເອົາເນື້ອໃນຂອງກົດໝາຍ ແລະ ລະບຽບການ ເຂົ້າສູ່ຊີວິດສັງຄົມ ໂດຍຜ່ານວັດທະນະທຳ ແລະ ສິລະປະ ເປັນຕົ້ນການສະແດງລະຄອນ, ບົດກາບກອນ, ຂັບລຳ, ບົດເພງ ແລະ ຮູບພາບ[7].

ການໂຄສະນາເຜີຍແຜ່ກົດໝາຍຜ່ານວັດທະນະທຳ ແລະ ສິລະປະຕ້ອງປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການຍຸຕິທຳ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ.

**13. ຄວາມໝາຍ ພະນັກງານໂຄສະນາເຜີຍແຜ່ກົດໝາຍ**

ພະນັກງານໂຄສະນາເຜີຍແຜ່ກົດໝາຍ ເປັນຂົວຕໍ່ລະຫວ່າງພັກ-ລັດກັບປະຊາຊົນ, ພະນັກງານເປັນປັດໄຈຕັດສິນຕໍ່ຜົນສຳເລັດຫຼືການປະລາໄຊຂອງການຈັດຕັ້ງປະຕິບັດແນວທາງຂອງພັກແລະກົດໝາຍຂອງລັດ.ສະນັ້ນ, ຜູ້ທີ່ເປັນພະນັກງານຈຶ່ງມີບົດບາດສຳຄັນໃນການໂຄສະນາເຜີຍແຜ່ແນວທາງຂອງພັກແລະກົດໝາຍຂອງລັດ.

ພະນັກງານໂຄສະນາເຜີຍແຜ່ກົດໝາຍ ແມ່ນບຸກຄົນທີ່ມີລະດັບຄວາມຮູ້ກ່ຽວກັບກົດໝາຍໃດໜຶ່ງທີ່ແນ່ນອນຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ມອບໝາຍຈາກອົງການຈັດຕັ້ງຂອງຕົນໃຫ້ຮັບຜິດຊອບໂຄສະນາເຜີຍແຜ່, ຊີ້ແຈງ, ອະທິບາຍ ແລະ ແນະນຳເນື້ອໃນຂອງກົດໝາຍໃດໜຶ່ງຢ່າງລະອຽດຈະແຈ້ງໃຫ້ແກ່ພົນລະເມືອງໄດ້ຮັບຮູ້.

**14. ຄວາມໝາຍຂອງການສົນທະນາເພື່ອແລກປ່ຽນປະສົບການກ່ຽວກັບການໂຄສະນາເຜີຍກົດໝາຍ**

ການສົນທະນາ ເພື່ອແລກປ່ຽນປະສົບການໃນການໂຄສະນາເຜີຍແຜ່ກົດໝາຍ ແມ່ນວິທີການ, ໃນນັ້ນຄູຝຶກຈັດຕັ້ງການສົນທະນາເປັນກຸ່ມ ເພື່ອແລກປ່ຽນຄຳຄິດຄຳເຫັນ ລະຫວ່າງສຳມະນາກອນ ກັບຜູ້ບັນຍາຍ ຫຼື ລະຫວ່າງສຳມະນາກອນດ້ວຍກັນ ເພື່ອແນໃສ່ລະດົມສະຕິປັນຍາຂອງລວມໝູ່ ໃນການແກ້ໄຂບັນຫາໃດໜຶ່ງ ທີ່ເກີດຂຶ້ນຈາກການດຳລົງຊີວິດຕົວຈິງໃນສັງຄົມ.

ການສົນທະນາ ເພື່ອແລກປ່ຽນປະສົບການໃນການໂຄສະນາເຜີຍແຜ່ກົດໝາຍ ແມ່ນການສົນທະນາ ຫຼື ໂຕ້ຖຽງກ່ຽວກັບບັນຫາໃດໜຶ່ງທາງດ້ານກົດໝາຍທີ່ມີຄວາມສົນໃຈຮ່ວມກັນ, ຄວາມຄິດຄວາມເຫັນນັ້ນອາດຈະ

---

[6]ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020, ໝວດທີ 2, ມາດຕາ 18.

[7]ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ ປີ 2020, ໝວດທີ 2, ມາດຕາ 19.

ຖືກຕ້ອງສອດຄ່ອງກັນ, ໄປຕາມລວງດຽວກັນ ຫຼື ອາດຈະຂັດແຍ່ງກັນ. ການສົນທະນາເພື່ອແລກປ່ຽນປະສົບການ ອາດຈະເປັນຄົນສອງຄົນ ຫຼື ອາດຈະເປັນກຸ່ມ, ສິ່ງສຳຄັນໃນການສົນທະນາເພື່ອແລກປ່ຽນປະສົບການຕ້ອງເປັນໄປເພື່ອສ້າງມິດຕະພາບ, ເພື່ອປະໂຫຍດ ແລະ ຮັບຟັງຄວາມຄິດຄວາມເຫັນຊຶ່ງກັນ ແລະ ກັນ, ບໍ່ແມ່ນເພື່ອເອົາຊະນະ ຫຼື ເພື່ອສະແດງຄວາມເດັ່ນເໜືອກວ່າຜູ້ອື່ນ.

ການສົນທະນາເພື່ອແລກປ່ຽນປະສົບການ ເປັນການສົ່ງ-ຮັບຂໍ້ມູນຂ່າວສານທີ່ງ່າຍທີ່ສຸດ ເຮັດໄດ້ວ່ອງໄວທີ່ສຸດ ແຕ່ມັນກໍມີບົດບາດສຳຄັນຫຼາຍໃນການປະຕິບັດໜ້າທີ່ວຽກງານຂອງພະນັກງານໂຄສະນາເຜີຍແຜ່ກົດໝາຍ ຊຶ່ງຈະຕ້ອງໄດ້ພົບປະເວົ້າຈາກັນ ເພື່ອປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນ ຫຼື ປະສົບການໃນການປະຕິບັດວຽກງານຜ່ານມາ.

ການສົນທະນາເພື່ອແລກປ່ຽນປະສົບການເປັນກິດຈະກຳລະຫວ່າງພະນັກງານໂຄສະນາເຜີຍແຜ່ກົດໝາຍດ້ວຍກັນ. ກິດຈະກຳນີ້ເປັນສິລະປະຢ່າງໜຶ່ງ, ຜູ້ທີ່ມີສິລະປະໃນການສົນທະນາ ແນ່ນອນຕ້ອງເປັນຜູ້ທີ່ມີສະເໜ່ໃນຕົວ , ມີໄຫວພິບໃນການພິຈາລະນາ, ເວົ້າເປັນ, ຟັງເປັນ, ຕັ້ງໃຈຟັງ, ຍອມຮັບຟັງ, ທົນຟັງ, ເວົ້າຖືກກັບກາລະເທສະ ແລະ ເຫດການ, ບໍ່ເວົ້າເລື່ອງສ່ວນຕົວຂອງຜູ້ເວົ້າ ຫຼື ຜູ້ຟັງ, ເວລາສົນທະນາຄວນໃຊ້ພາສາທີ່ສຸພາບມີມາລະຍາດດີ, ບໍ່ເວົ້າແຕ່ຄົນດຽວ, ບໍ່ເວົ້າຈາອວດອ້າງ, ມີກິລິຍາສຸພາບອ່ອນໂຍນ.

**References:**


1. ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020;
2. ດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນສະບັບເລກທີ 184/ລບ, ລົງວັນທີ 26ມິຖຸນາ 2019;
3. ປະມວນເອກະສານຝຶກອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
4. ປື້ມໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ ສປປ ລາວ, ປີ 2022;
5. ປອ. ຈອມຄຳບຸບຜາລີວັນ, ປື້ມຄູ່ມື ວຽກງານເຜີຍແຜ່, ສຶກສາອົບຮົມກົດໝາຍ, ປີ 2008;
6. ວາລະສານສຶກສາສາດ ມະຫາວິທະຍາໄລສຸໂຂໄທ, ເຕັກນິກການເກັບຂໍ້ມູນເຊີງຄຸນນະພາບທີ່ມີປະສິດທິພາບ, ປີທີ 12, ສະບັບ ທີ່ 1 (ມັງກອນ-ມິຖຸນາ) 2562;
7. ຄະນະໂຄສະນາອົບຮົມສູນກາງພັກ, ປື້ມຄູ່ມືວຽກງານໂຄສະນາ, ປີ 2016.